**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຫຼວງນໍ້າທາ
ເຈົ້າແຂວງ

ເລກທີ ...553.../ຈຂ
ຫຼວງນໍ້າທາ, ວັນທີ 23 ກັນຍາ 2022

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອ

- **ອີງຕາມ** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015; ໝວດທີ 4 ມາດຕາ 19 ແລະ ມາດຕາ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- **ອີງຕາມ** ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ( ສະບັບປັບປຸງ ) ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- **ອີງຕາມ** ມະຕິກອງປະຊຸມສະໄໝສາມັນເທື່ອທີ່ 3 ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ຊຸດທີ 2, ສະບັບເລກທີ 04/ຄປຈຂ ລົງວັນທີ 13 ກັນຍາ 2022 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ຫຼວງນໍ້າທາ ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອ;
- **ອີງຕາມ** ໜັງສືສະເໜີ ຂອງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 34/ພຊສ, ລົງວັນທີ 7 ກຸມພາ 2022.

## ເຈົ້າແຂວງຫຼວງນໍ້າທາຕົກລົງ:
## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບ ແລະ ມາດຕະການໃນການຄຸ້ມຄອງສິ່ງເສດເຫຼືອ ພາຍໃນ ແຂວງ ເພື່ອເປັນການ ປົກປັກຮັກສາ ຟື້ນຟູ ບູລະນະສິ່ງແວດລ້ອມໃຫ້ມີຄວາມສວຍສົດງົດງາມ, ຕົວເມືອງສະອາດ ງາມຕາ, ມີອາກາດບໍລິສຸດ ແລະ ປາສະຈາກການຖິ້ມສິ່ງເສດເຫຼືອຊະຊາຍ. ເພື່ອແນ່ໃສ່ການສ້າງຈິດສຳນຶກໃຫ້ທົ່ວ ສັງຄົມເອົາໃຈໃສ່ໃນການປົກປັກຮັກສາສິ່ງແວດລ້ອມ, ເຮັດໃຫ້ສະພາບແວດລ້ອມນັບມື້ນັບດີຂຶ້ນ, ຫຼຸດຜ່ອນຜົນ ກະທົບຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດໃນແຕ່ລະດ້ານຂອງການພັດທະນາເປັນຕົ້ນ: ບັນດາ ໂຄງການລົງທຶນ, ກິດຈະການພັດທະນາ, ທຸລະກິດຄອບຄົວ, ຕົວເມືອງ, ຊຸມຊົນ, ບຸກຄົນ ແລະ ອົງການການຈັດຕັ້ງ ຂັ້ນຕ່າງໆໃນສະເພາະໜ້າ ແລະ ຍາວນານ. ພ້ອມດຽວກັນນັ້ນກໍ່ເພື່ອປະກອບສ່ວນໃນການພັດທະນາເສດຖະກິດສັງຄົມຂອງແຂວງ ແລະ ປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ2 ການຄຸ້ມຄອງສິ່ງເສດເຫຼືອ**

ການຄຸ້ມຄອງສິ່ງເສດເຫຼືອ ແມ່ນການບໍລິຫານຈັດການສິ່ງເສດເຫຼືອໃຫ້ຖືກຕ້ອງຕາມວິທີການ ເປັນຕົ້ນແມ່ນ: ການເກັບຮັກສາ, ການບໍາບັດ, ເຜົາ, ຝັງ ແລະ ການໝູນໃຊ້ຄືນໃໝ່ (ການຄັດແຍກ) ໂດຍປະຕິບັດຕາມຂັ້ນຕອນ ແລະ ລະບຽບການສະເພາະທີ່ໄດ້ກໍານົດໄວ້ຢ່າງລະອຽດ, ລວມທັງຮັບປະກັນບໍ່ໃຫ້ຖິ້ມຊະຊາຍ ຕາມແຄມທາງ, ແຄມນໍ້າ ແລະ ສະຖານທີ່ຫ້າມອື່ນໆ.

ການຄຸ້ມຄອງສິ່ງເສດເຫຼືອແບບມີປະສິດທິພາບສູງສຸດ ສາມາດຫຼຸດປະລິມານຂີ້ເຫຍື້ອທີ່ຈະຕ້ອງສົ່ງໄປທໍາລາຍດ້ວຍລະບົບຕ່າງໆ ໃຫ້ໜ້ອຍທີ່ສຸດ ແລະ ສາມາດນໍາສິ່ງເສດເຫຼືອກັບມາໃຊ້ປະໂຫຍດຄືນໃໝ່ ເປັນຕົ້ນແມ່ນການໃຊ້ຊໍ້າ ແລະ ແປຮູບເພື່ອນໍາມາໃຊ້ໃໝ່ ລວມທັງການກໍາຈັດທີ່ໄດ້ຜົນຕອບແທນເຊັ່ນ: ການເຮັດປຸຍໝັກ, ການປ່ຽນສິ່ງເສດເຫຼືອໃຫ້ເປັນພະລັງງານ ແລະ ການນໍາໄປແປຮູບໃໝ່ (ລະບົບ3R: Reduce, Reuse, Recycle).

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສິ່ງເສດເຫຼືອ:** ໝາຍເຖິງວັດຖຸ, ສານເຄມີສິ່ງໃດໜຶ່ງ ທີ່ບຸກຄົນ, ນິຕິບຸກຄົນບໍ່ຕ້ອງການ ຫຼື ສາມາດນໍາໃຊ້ ຫຼື ບໍ່ສາມາດນໍາໃຊ້ໄດ້ອີກ ເຊັ່ນ: ນໍ້າມັນປ່ຽນຖ່າຍ, ຂີ້ເຫຍື້ອ, ນໍ້າເປື້ອນ ແລະ ສິ່ງອື່ນໆ ທີ່ເປັນພິດ ຫຼື ບໍ່ເປັນພິດ.

2. **ສິ່ງແວດລ້ອມ:** ໝາຍເຖິງທຸກສິ່ງທຸກຢ່າງທີ່ມີຊີວິດ ແລະ ບໍ່ມີຊີວິດ ເຊິ່ງເກີດຂຶ້ນຕາມທໍາມະຊາດ ຫຼື ຍ້ອນມະນຸດສ້າງຂຶ້ນ ທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ. ທີ່ມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນ ເຊິ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບຕໍ່ການດໍາລົງຊີວິດ, ການຜະລິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທໍາມະຊາດ;

3. **ມົນລະພິດ ໝາຍເຖິງ** ສານເຄມີ, ກໍາມັນຕະພາບລັງສີ, ຝຸ່ນລະອອງ, ຄວັນ, ລວມທັງ ສຽງ, ແສງ, ສີ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນ ທີ່ເຈືອປົນໃນອາກາດ, ດິນ, ນໍ້າ ທີ່ມີຄ່າຄວາມເຂັ້ມຂຸ້ນເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ແລະ ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ເຊິ່ງເກີດຂຶ້ນຈາກການກະທໍາຂອງມະນຸດ ຫຼື ຕາມທໍາມະຊາດ ທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ;

4. **ສານເຄມີເປັນພິດ ໝາຍເຖິງ** ວັດຖຸ ຫຼື ທາດເບື່ອທີ່ເຈືອປົນໃນອາກາດ, ດິນ ຫຼື ນໍ້າ ຊຶ່ງສົ່ງຜົນສະທ້ອນອັນບໍ່ດີຕໍ່ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ;

5. **ລະບົບນິເວດ ໝາຍເຖິງ** ສາຍກ່ຽວພັນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບລະຫວ່າງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທໍາມະຊາດ;

6. ລະບົບ 3R: ແມ່ນການຫຼຸດຜ່ອນການນໍາໃຊ້, ການນໍາມາໃຊ້ຊໍ້າ ແລະ ການນໍາໄປແປຮູບໃໝ່;

7. **ຂຽວ ໝາຍເຖິງ** ການເພີ່ມພື້ນທີ່ສີຂຽວ ເຂດທີ່ມີຕົ້ນໄມ້ໃຫ້ຄວາມຮົ່ມເຢັນ ແລະ ອາກາດສົດຊື່ນ ມີຄວາມອຸດົມສົມບູນຂອງພືດພັນຕ່າງໆ ເຊັ່ນ: ສວນສາທາລະນະ, ສວນຄົວ, ສວນດອກໄມ້ປະດັບ, ເດີ່ນຫຍ້າ, ມີຕົ້ນໄມ້ຕາມແຄມທາງ, ແຄມນໍ້າ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດແບບມີປະສິດທິຜົນ;

8. **ສະອາດ ໝາຍເຖິງ** ອາກາດບໍລິສຸດ, ນໍ້າສະອາດ, ດິນທີ່ບໍ່ມີສານປົນເປື້ອນ ແລະ ປາສະຈາກຂີ້ເຫຍື້ອຊະຊາຍລວມທັງຄວາມສະອາດຂອງສະຖານທີ່ ເຊັ່ນ: ທີ່ຢູ່ອາໄສ, ສະຖານທີ່ບໍລິການ ແລະ ຖະໜົນຫົນທາງ;

9. **ງາມຕາ ໝາຍເຖິງ** ການຈັດສັນ ແລະ ຕົບແຕ່ງ ຫຼື ປະດັບປະດາ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈົບງາມ;

**ມາດຕາ 4 ນະໂຍບາຍກ່ຽວກັບວຽກງານການຄຸ້ມຄອງສິ່ງເສດເຫຼືອ**

ອົງການປົກຄອງແຂວງໃຫ້ຄວາມສໍາຄັນ, ຊຸກຍູ້, ສົ່ງເສີມ ແລະ ຈັດຕັ້ງບໍລິຫານຈັດການສິ່ງເສດເຫຼືອໃຫ້ຖືກຕ້ອງຕາມຫຼັກວິຊາການ ເພື່ອເຮັດໃຫ້ສັງຄົມມີຄວາມສະອາດ, ມີອາກາດສົດຊື່ນເປັນຕາໜ້າຢູ່ອາໃສ, ຮັບປະກັນໃຫ້ສະພາບແວດລ້ອມອ້ອມຂ້າງ ນັບມື້ນັບດີຂຶ້ນ ຕາມທິດ ສີຂຽວ ສະອາດ ງາມຕາ ແລະ ຍືນຍົງ.

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມ ແລະ ສ້າງຈິດສໍານຶກ ສຶກສາອົບຮົມໃຫ້ທົ່ວສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄຸນປະໂຫຍດຂອງການບໍລິຫານຈັດການສິ່ງເສດເຫຼືອ, ເປັນຕົ້ນແມ່ນການພັດທະນາຊັບພະຍາກອນມະນຸດ, ກໍ່ສ້າງພື້ນຖານໂຄງລ່າງ, ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ, ຮັບປະກັນ ໃນການປົກປັກຮັກສາ ຟື້ນຟູ ບູລະນະສິ່ງແວດລ້ອມ ໃຫ້ດີຂຶ້ນເລື້ອຍໆ.

ອົງການປົກຄອງແຂວງ ອໍານວຍຄວາມສະດວກ ແລະ ປຸກລະດົມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ໃຫ້ມີສ່ວນຮ່ວມ ປະກອບສ່ວນເຂົ້າໃນວຽກງານ ການຄຸ້ມຄອງສິ່ງເສດເຫຼືອ ແລະ ພັດທະນາ ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງເທື່ອລະກ້າວ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ**

1. ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ໄລຍະ;

2. ການບໍລິຫານຈັດການ ສິ່ງເສດເຫຼືອເປັນຕົ້ນແມ່ນການເກັບຮັກສາ, ການກໍາຈັດ, ການນໍາໃຊ້ ຫຼື ການນໍາມາຜະລິດຄືນໃໝ່;

3. ການປ້ອງກັນ ແລະ ຫຼຸດຜ່ອນການກໍ່ໃຫ້ເກີດຜົນກະທົບທາງດ້ານມົນລະພິດຕໍ່ສະພາບແວດລ້ອມໃນເຂດໃກ້ຄຽງ;

4. ການນໍາໃຊ້ເຄື່ອງມື ແລະ ກົນໄກ, ມາດຕະການດ້ານວິຊາການໃນການຄຸ້ມຄອງສິ່ງເສດເຫຼືອ ແລະ ມາດຕະການຕໍ່ຜູ້ລະເມີດເປັນຕົ້ນແມ່ນ: ການນໍາໃຊ້ເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມເຂົ້າໃນການກໍາຈັດ, ການນໍາໃຊ້ ແລະ ການຜະລິດຄືນໃໝ່;

5. ຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ແລະ ມີສະຖານທີ່ບໍາບັດເພື່ອກໍາຈັດສິ່ງເສດເຫຼືອໃຫ້ຖືກຕ້ອງ.

**ມາດຕາ 6 ຂອບເຂດການນໍາໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ຄົນຕ່າງປະເທດ ຢູ່ພາຍໃນແຂວງຫຼວງນໍ້າທາ ເທົ່ານັ້ນ.

## ໝວດທີ 2
## ການສໍາຫຼວດ ແລະ ການປ້ອງກັນສິ່ງເສດເຫຼືອ

**ມາດຕາ 7 ການສໍາຫຼວດສິ່ງເສດເຫຼືອ**

ແມ່ນການເກັບກຳຂໍ້ມູນປະເພດ ແລະ ປະລິມານສິ່ງເສດເຫຼືອທີ່ຢູ່ໃນການຄອບຄອງ, ນຳໃຊ້ ແລະ ເກັບຮັກສາຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງເພື່ອເປັນຂໍ້ມູນໃນການຂຶ້ນບັນຊີ ແລະ ວາງແຜນບຳບັດ ຫຼື ກຳຈັດ ໃຫ້ປະຕິບັດດັ່ງນີ້:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ປະສານສົມທົບກັບຫ້ອງການທີ່ກ່ຽວຂ້ອງດຳເນີນການສຳຫຼວດສິ່ງເສດເຫຼືອທີ່ເກີດຈາກການຄອບຄອງ, ການຜະລິດ, ການນຳໃຊ້ ແລະ ການເກັບຮັກສາ ຂອງບຸກຄົນ ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ການຖິ້ມສິ່ງເສດເຫຼືອຊະຊາຍ ໃນຂອບເຂດເທດສະບານແຂວງ ແລ້ວລາຍງານໃຫ້ອົງການປົກຄອງແຂວງ.

2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ປະສານສົມທົບກັບຫ້ອງການທີ່ກ່ຽວຂ້ອງດຳເນີນການສຳຫຼວດສິ່ງເສດເຫຼືອ ທີ່ເກີດຈາກການຄອບຄອງ, ການນຳໃຊ້ ຫຼື ເກັບຮັກສາຂອງບຸກຄົນ ນິຕິບຸກຄົນ ຫຼື ຄອບຄົວ ເປັນຕົ້ນແມ່ນຈາກການຜະລິດ, ການບໍລິການ, ການພັດທະນາພື້ນຖານໂຄງລ່າງ ແລະ ການລົງທຶນຕ່າງໆ ພ້ອມທັງການຖິ້ມສິ່ງເສດເຫຼືອຊະຊາຍ ໃນຂອບເຂດທ້ອງຖິ່ນຂອງຕົນ ແລ້ວ ລາຍງານໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງຂັ້ນເມືອງເພື່ອຮັບຊາບ.

**ມາດຕາ 8 ການປ້ອງກັນສິ່ງເສດເຫຼືອ**

ແມ່ນການເຄື່ອນໄຫວສະກັດກັ້ນທຸກເຫດການທີ່ຈະເກີດຂຶ້ນ ຫຼື ພວມເກີດຂຶ້ນຈາກສິ່ງເສດເຫຼືອເຊິ່ງເປັນສາເຫດທີ່ເຮັດໃຫ້ສະພາບແວດລ້ອມ-ສັງຄົມ ຖືກທຳລາຍ ແລະ ເຊື່ອມໂຊມລົງ ທີ່ເກີດຈາກການກະທຳຂອງມະນຸດ ແລະ ທຳມະຊາດເຊັ່ນ:

1. ການເກັບມ້ຽນຂີ້ເຫຍື້ອ, ການປ່ອຍນ້ຳເປື້ອນ ແລະ ອື່ນໆ ຕ້ອງບໍ່ໃຫ້ຊະຊາຍ ແລະ ຮົ່ວໄຫຼເຊິ່ງ ສ້າງຄວາມເປື້ອນເປິ ສິ່ງກິ່ນເໝັນຕໍ່ສັງຄົມ ແລະ ເຂດໃກ້ຄຽງ;
2. ການລ້ຽງສັດປະເພດຕ່າງໆ ຕາມຄົວເຮືອນ ຕ້ອງຕັ້ງຢູ່ບ່ອນທີ່ມີເງື່ອນໄຂເໝາະສົມຫ່າງໄກຈາກຊຸມຊົນ, ເຮືອນຄົນ, ຫ່າງຈາກຕາຝັ່ງແມ່ນ້ຳ. ພ້ອມດຽວກັນນັ້ນ ຕ້ອງໄດ້ອະນາໄມໃຫ້ສະອາດຢູ່ສະເໝີ ເພື່ອບໍ່ໃຫ້ສິ່ງຜົນກະທົບຕໍ່ບຸກຄົນ ແລະ ສັງຄົມອ້ອມຂ້າງ.
3. ການສ້າງກິດຈະການຕ່າງໆ ແລະ ການປະກອບອາຊີບໃດໜຶ່ງຈະຕ້ອງໄດ້ຄຳນຶງ ເຖິງຄວາມເໝາະສົມຂອງສະຖານທີ່ ແລະ ເງື່ອນໄຂທີ່ເອື້ອອຳນວຍຄວາມສະດວກ ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມອ້ອມຂ້າງ, ຂອງບຸກຄົນໃກ້ຄຽງ, ສັງຄົມ ແລະ ທຳມະຊາດ.

## ໝວດທີ 3
## ປະເພດສິ່ງເສດເຫຼືອ ແລະ ວິທີກຳຈັດສິ່ງເສດເຫຼືອ

**ມາດຕາ 9 ປະເພດຂອງສິ່ງເສດເຫຼືອ**

ສິ່ງເສດເຫຼືອແບ່ງອອກມີ2ປະເພດດັ່ງນີ້:

1. ສິ່ງເສດເຫຼືອ ທົ່ວໄປ: ໄດ້ແກ່ ເສດອາຫານ, ຢາງພາດສະຕິກ, ພືດ, ຜັກ, ເສດໄມ້, ເສດເສື້ອຜ້າ, ນ້ຳເປື້ອນ, ຂີ້ເຫຍື້ອ, ປະເພດອາຈົມ, ຊາກສັດຕ່າງໆ, ສິ່ງທີ່ເຫຼືອໃຊ້ ແລະ ອື່ນໆ;
2. ສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ: ໄດ້ແກ່ ຂີ້ເຫຍື້ອຈາກໂຮງໝໍ, ຄລີນິກ, ໂຮງງານອຸດສາຫະກຳທີ່ນຳໃຊ້ສານເຄມີ, ໂຮງງານປຸງແຕ່ງແຮ່ທາດ, ໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ໂຮງງານຜະລິດສານເຄມີ;

**ມາດຕາ 10 ວິທີກຳຈັດສິ່ງເສດເຫຼືອ**

**1. ການກຳຈັດສິ່ງເສດເຫຼືອທົ່ວໄປ:** ຕ້ອງມີການຄັດແຍກປະເພດຂອງສິ່ງເສດເຫຼືອ ເພື່ອສະດວກໃນການກຳຈັດເຊັ່ນ: ປະເພດສາມາດນຳໃຊ້ຄືນໃໝ່, ຜະລິດຄືນໃໝ່, ແປຮູບເປັນຜະລິດຕະພັນໃໝ່, ກຳຈັດຕາມວິທີການ, ເຕັກນິກ ແລະ ໃນຂອບເຂດທີ່ໄດ້ກຳນົດໄວ້;

**2. ການກຳຈັດສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ:** ການກຳຈັດສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍ ເຊັ່ນ: ວັດຖຸລະເບີດ, ວັດຖຸໄວໄຟ, ສານ ເຄມີ, ສິ່ງເສດເຫຼືອເອເລັກໂຕຣນິກ, ຖ່ານໄຟສາຍ, ໝໍ້ໄຟເກົ່າ, ລວມທັງນ້ຳເປື້ອນ ຈາກໂຮງໝໍ, ຄຼີນິກ, ໂຮງງານອຸດສາຫະກຳ ໂຮງງານທີ່ນຳໃຊ້ສານເຄມີ ເຂົ້າໃນການຜະລິດ, ໂຮງງານປຸງແຕ່ງແຮ່ທາດ, ໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ຊຶ່ງຕ້ອງໄດ້ສະເໜີຫາພາກສ່ວນກ່ຽວຂ້ອງຄົ້ນຄ້ວາພິຈາລະນາ ຫາວິທີການໃນການກຳຈັດ, ທຳລາຍໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ໃນຈຸດທີ່ໄດ້ກຳນົດໄວ້;

## ໝວດທີ 4
## ການເກັບຮັກສາສິ່ງເສດເຫຼືອ ແລະ ການອະນາໄມ

**ມາດຕາ 11 ການເກັບຮັກສາສິ່ງເສດເຫຼືອ**

1. ສິ່ງເສດເຫຼືອຈາກຂະບວນການຜະລິດກະສິກຳ, ອຸດສາຫະກຳ, ການດຳເນີນທຸລະກິດ, ສຳນັກງານອົງການ, ໂຮງຮຽນ, ຫ້າງຮ້ານ, ບ້ານ, ຄົວເຮືອນ ແລະ ສະຖານທີ່ຕ່າງໆ ຕ້ອງມີຄວາມຮັບຜິດຊອບໃນການເກັບຮັກສາ, ຄັດແຍກ, ຝັງ ແລະ ບຳບັດ ໃຫ້ຖືກຕ້ອງຕາມວິທີ ແລະ ໃຊ້ບໍລິການຂົນຂີ້ເຫຍື້ອຂອງແຂວງ ແລະ ເມືອງທີ່ຈັດໄວ້, ຖ້າເຂດຫ່າງໄກຊອກຫຼີກ, ການບໍລິການເຂົ້າບໍ່ເຖິງ ແມ່ນຕ້ອງຈັດສັນເຂດຖິ້ມສະເພາະໃຫ້ຖືກຕ້ອງຕາມຫຼັກການ.

2. ສິ່ງເສດເຫຼືອຈາກໂຮງໝໍ, ຄຼີນິກ ຕ້ອງມີການເກັບມ້ຽນໃຫ້ດີ ຮັບປະກັນບໍ່ໃຫ້ປະປົນກັບສິ່ງເສດເຫຼືອທົ່ວໄປ ແລະ ກຳຈັດໃນຂອບເຂດທີ່ໄດ້ອານຸມັດໄວ້ເທົ່ານັ້ນ.

3. ການກຳຈັດສິ່ງເສດເຫຼືອທີ່ເປັນພິດ ແລະ ອັນຕະລາຍແມ່ນໃຫ້ສະເໜີຫາພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາພິຈາລະນາ ວິທີການໃນການກຳຈັດຄັກແນ່, ຫ້າມບໍ່ໃຫ້ກຳຈັດເອງ ຫຼື ຖິ້ມຊະຊາຍ.

4. ຜູ້ດຳເນີນກິດຈະການໂຮງງານຕ້ອງໄດ້ອອກແບບບຳບັດ ແລະ ກຳຈັດສິ່ງເສດເຫຼືອຂອງໂຮງງານໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມແຜນຄຸ້ມຄອງສິ່ງແວດລ້ອມ.

**ມາດຕາ 12 ການອະນາໄມ**

ແມ່ນການຮັກສາຄວາມສະອາດ, ຈັດສັນໃຫ້ເປັນລະບຽບ ຮຽບຮ້ອຍ ສະອາດງາມຕາ, ບໍ່ປ່ອຍໃຫ້ຮົກເຮື້ອ, ເປື້ອນເປິ ແລະ ສິ່ງຜົນກະທົບຕໍ່ຊີວິດຈິດໃຈ, ສະພາບແວດລ້ອມອ້ອມຂ້າງ ແລະ ສັງຄົມເຊັ່ນ:

**1. ສະຖານທີ່ຢູ່ອາໄສ**

ບ້ານ, ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ, ໂຮງຈັກໂຮງງານ, ຫ້າງຮ້ານ ແລະ ສະຖານທີ່ຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມສະອາດງາມຕາ, ບໍ່ປ່ອຍໃຫ້ຂີ້ເຫຍື້ອຮົກເຮື້ອ, ເປື້ອນເປິ, ເນົ່າເໝັນເປັນຕົ້ນແມ່ນ:

1) ການເກັບມ້ຽນຂີ້ເຫຍື້ອເປັນປົກກະຕິ, ມີຈຸດເກັບມ້ຽນຂີ້ເຫຍື້ອຂອງຕົນເອງສະເພາະ ແລະ ມີການນຳໃຊ້ການບໍລິການຂີ້ເຫຍື້ອຂອງແຂວງ ແລະ ເມືອງ ຕ້ອງຮັບປະກັນບໍ່ໃຫ້ຈູດ ແລະ ຖິ້ມຊະຊາຍ;

2) ຕ້ອງມີການອະນາໄມຮ່ອງລະບາຍນ້ຳໃນເຂດອ້ອມຮອບຂອງຕົນໃຫ້ສະດວກດີ, ບໍ່ສ້າງສິ່ງເປື້ອນເປິເປັນຕົ້ນແມ່ນ: ຂີ້ດິນ, ຂີ້ຕົມ, ຂີ້ເຫຍື້ອ ແລະ ນ້ຳເປື້ອນອັນເປັນສາເຫດກໍ່ໃຫ້ເກີດມີກິ່ນເໝັນ, ນ້ຳຂັງ ແລະ ຕ້ອງມີການອະນາໄມເປັນປົກກະຕິ;

3) ຕາມເສັ້ນທາງຫຼັກ, ເສັ້ນທາງຮ່ອມ, ສະຖານທີ່ສາທາລະນະ, ເຂດຊຸມຊົນ, ໂຮງຮຽນ, ບັນດາສຳນັກງານອົງການ, ບ້ານ ຕ້ອງມີການຈັດສັນໃຫ້ສະອາດງາມຕາໂດຍສະເພາະຕ້ອງມີ: ຖັງຂີ້ເຫຍື້ອ, ກະຕ່າຫຼືຖົງໃສ່ຂີ້ເຫຍື້ອໄວ້ຢູ່ຕາມແຕ່ລະຈຸດ ແລະ ຕ້ອງຮັບປະກັນໃຫ້ມີຄວາມສະອາດ ແລະ ມີຄວາມເປັນລະບຽບຮຽບຮ້ອຍສະອາດງາມຕາ.

4) ພາຍໃນບ້ານຕ້ອງມີການຈັດສັນ ແລະ ຕົບແຕ່ງ ຫຼື ປະດັບປະດາ ແລະ ມີການອະນາໄມ ໃຫ້ສະອາດງາມຕາຢ່າງເປັນປົກກະຕິ;

**2. ສະຖານທີ່ສິ່ງກໍ່ສ້າງ**

ອາຄານ ແລະ ສິ່ງປຸກສ້າງ ນັບທັງຮົ້ວ, ກຳແພງ ຈະເປັນກິດຈະການລວມໝູ່, ບຸກຄົນ ຫຼື ຂອງສາທາລະນະຕ້ອງມີການປົກປັກຮັກສາ ໃຫ້ມີຄວາມສະອາດ, ມີຄວາມເປັນລະບຽບ ຮຽບຮ້ອຍຢູ່ສະເໝີ ຖ້າສິ່ງປຸກສ້າງອັນໃດເຫັນວ່າ ເຊື່ອມໂຊມ ຈະຕ້ອງໄດ້ມີການສ້ອມແປງຄືນໃໝ່;

**3. ການຂົນສົ່ງ**

ການຂົນສົ່ງສິ່ງຂອງປະເພດຕ່າງໆ ເປັນຕົ້ນ: ບັນທຸກຂີ້ດິນ, ຫີນ, ແຮ່-ຊາຍ, ການຂົນຂີ້ເຫຍື້ອ ແລະ ສິ່ງສົ່ງກິ່ນເໝັນ ຕ້ອງມີການຫຸ້ມຫໍ່, ປົກປິດ ແລະ ບັນທຸກບໍ່ໃຫ້ເກີນມາດຖານ ພ້ອມທັງຮັບປະກັນບໍ່ໃຫ້ຕົກເຮ່ຍໃສ່ເສັ້ນທາງ, ແຄມທາງ ແລະ ສະຖານທີ່ຕ່າງໆ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 13 ຂໍ້ຫ້າມສຳລັບຄະນະຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຊີ້ນຳລວມ

1. ຫ້າມປະລະໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນທີ່ການຈັດຕັ້ງໄດ້ມອບໝາຍໃຫ້;
2. ຫ້າມສວຍໃຊ້ສິດໜ້າທີ່ເກີນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍໃຊ້ຄວາມຮຸນແຮງນາບຂູ່, ແລະນຳໃຊ້ມາດຕະການອື່ນໆ ທີ່ສ້າງຜົນກະທົບອັນບໍ່ດີຕໍ່ການຈັດຕັ້ງ ແລະ ສັງຄົມ;
3. ຫ້າມລະເລີງ ເມີນເສີຍຕໍ່ການປະຕິບັດໜ້າທີ່, ທວງເອົາ, ຖ່ວງດຶງ ຫຼື ປອມແປງເອກກະສານເຊັ່ນ: ປອມແປງລາຍເຊັນ, ການໃຫ້ຂໍ້ມູນປອມຕ່າງໆເປັນຕົ້ນ;
4. ຫ້າມໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ແລະ ນຳໃຊ້ມາດຕະການອື່ນໆທີ່ບໍ່ຖືກຕ້ອງຕາມກົດໝາຍ;
5. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວກ່ຽວກັບວຽກງານດັ່ງກ່າວ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;

### ມາດຕາ 14 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນທົ່ວໄປ

1. ຈູດ, ຝັງ, ຖິ້ມ ແລະ ກຳຈັດສິ່ງເສດເຫຼືອ, ຖອກເຖ ແລະ ລະບາຍນ້ຳເປື້ອນລົງໃສ່ຮ່ອງນ້ຳ, ແມ່ນ້ຳ, ສະຖານທີ່ອື່ນໆ ໂດຍບໍ່ມີການບຳບັດ ຕາມມາດຖານເຕັກນິກ;
2. ຫ້າມໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວ ເພື່ອຜົນປະໂຫຍດຂອງຕົນ;

3. ຫ້າມໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານຂອງລັດໂດຍບໍ່ມີມູນຄວາມຈິງ;
4. ຫ້າມສວຍໃຊ້ຂໍ້ຕົກລົງສະບັບນີ້ ໄປນຳໃຊ້ເພື່ອຫາຜົນປະໂຫຍດໃຫ້ກັບຕົນເອງ, ໂດຍການນາບຂູ່ ແລະ ສ້າງຜົນກະທົບຕໍ່ສັງຄົມ;
5. ຫ້າມຂະແໜງການຂອງລັດ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ກຳນົດ ຫຼື ສ້າງຂໍ້ຕົກລົງຂຶ້ນເອງ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

**ມາດຕາ15 ຂໍ້ຫ້າມສຳລັບຜູ້ປະກອບການ**

1. ຫ້າມດຳເນີນທຸລະກິດໃດໜຶ່ງ ທີ່ສົ່ງກິ່ນເໝັນ, ສຽງດັງ, ປ່ອຍຄວັນ ເກີນມາດຖານທີ່ໄດ້ກຳນົດໄວ້;
2. ຫ້າມດຳເນີນທຸລະກິດທີ່ສ້າງສິ່ງເສດເຫຼືອເປັນຈຳນວນຫຼາຍ ແລະ ຖິ້ມຊະຊາຍ;
3. ຫ້າມຫລົບຫລີກການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່;
4. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ;

## ໝວດທີ 6

## ອົງການຄຸ້ມຄອງ ແລະ ກວດກາ

**ມາດຕາ 16 ອົງການຄຸ້ມຄອງ**

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງວຽກງານດັ່ງກ່າວ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເປັນຂະແໜງການຄຸ້ມຄອງ ທາງດ້ານວິຊາການ.

**ອົງການຄຸ້ມຄອງ ປະກອບມີ:**

**1.** ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
**2.** ອົງການພັດທະນາ ແລະ ບໍລິຫານ ຕົວເມືອງ (ອພບຕ);
**3.** ກອງບັນຊາການ ປກສ ແຂວງ ແລະ ເມືອງ ( ຕຳຫຼວດສິ່ງແວດລ້ອມ);
**4.** ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ;
**5.** ອົງການປົກຄອງບ້ານ;

**ມາດຕາ 17 ສິດ ແລະ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມມີດັ່ງນີ້:**

1. ຮ່ວມມືກັບບັນດາພະແນກການສ້າງເງື່ອນໄຂທີ່ຈຳເປັນດ້ານວິຊາການສຳລັບການບຳບັດແລະການກຳຈັດສິ່ງເສດເຫຼືອໃຫ້ເປັນໄປຕາມວິທີການທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້;

2. ໂຄສະນາ, ເຜີຍແຜ່, ສ້າງຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້, ມີສ່ວນຮ່ວມ ແລະ ປະກອບສ່ວນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

3. ປະສານສົມທົບກັບການຈັດຕັ້ງ ບັນດາພະແນກການ, ເທດສະບານແຂວງ ແລະ ເມືອງ ໃນການສ້າງເງື່ອນໄຂທີ່ຈຳເປັນໃນການບໍລິຫານຈັດການ ແລະ ຄຸ້ມຄອງສິ່ງເສດເຫຼືອ ຈາກຄົວເຮືອນ ແລະ ການບໍລິການ;

4. ເກັບກຳຂໍ້ມູນແຫຼ່ງທີ່ເກີດສິ່ງເສດເຫຼືອ ແລະ ການລະເມີດໂດຍສົມທົບກັບ ອພບຕ ແລະ ບັນດາພະແນກການກ່ຽວຂ້ອງເພື່ອແກ້ໄຂ ພ້ອມທັງລາຍງານໃຫ້ຂັ້ນເທິງຕົນຮັບຊາບເປັນປົກກະຕິ;

5. ລາຍງານກ່ຽວກັບເງື່ອນໄຂຈຳເປັນດ້ານວິຊາການໃນການເກັບຮັກສາ ຫຼື ສະຖານທີ່ບຳບັດສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍໃຫ້ທາງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາເຖິງຄວາມຈຳເປັນໃນການຄຸ້ມຄອງ ແລະ ທຳລາຍ;

6. ຕິດຕາມ ແລະ ລາຍງານສະພາບການຖິ້ມຫຼື ການເຜົາສິ່ງເສດເຫຼືອ ໃຫ້ທາງຄະນະຮັບຜິດຊອບຂັ້ນແຂວງ ເພື່ອດຳເນີນການຂັ້ນຕໍ່ໄປຕາມລະບຽບການ;

7. ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະຮັບຜິດຊອບຂອງ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ພ້ອມທັງສ້າງຖານເກັບກຳຂໍ້ມູນໃນວຽກງານດັ່ງກ່າວ;

8. ເປັນເຈົ້າການໃນການຮຽກເຊີນ ຕັກເຕືອນ ແລະ ປັບໃໝ່ຜູ້ລະເມີດ ຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 18 ສິດ ແລະ ໜ້າທີ່ ອົງການພັດທະນາ ແລະ ບໍລິຫານ ຕົວເມືອງ (ອພບຕ) ມີດັ່ງນີ້:**

1. ເຮັດບໍລິການຂົນສົ່ງສິ່ງເສດເຫຼືອຕາມເຂດເທດສະບານແຂວງ ແລະ ເທດສະບານເມືອງນຳໄປຖິ້ມຢູ່ສະໜາມຂີ້ເຫຍື້ອເປັນປົກກະຕິ;

2. ເປັນເຈົ້າການໃນການອະນາໄມຮ່ອງລະບາຍນ້ຳ,ເສັ້ນທາງຕາມເທດສະບານແຂວງເພື່ອບໍ່ໃຫ້ເປື້ອນເປິະນ້ຳຂັງ ເນົ່າເໝັນ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງທັງພາກລັດ, ເອກະຊົນ ແລະ ປະຊາຊົນ ໃນການສ້າງໂຄງລ່າງພື້ນຖານ ສຳລັບການຄຸ້ມຄອງ ແລະ ການບໍລິການກ່ຽວກັບສິ່ງເສດເຫຼືອ;

4. ຕິດຕາມກວດກາ ສະພາບເງື່ອນໄຂຈຳເປັນດ້ານວິຊາການ ສຳລັບການຄຸ້ມຄອງສິ່ງເສດເຫຼືອ ຂອງບັນດາສຳນັກງານຫ້ອງການ, ຫ້າງຮ້ານ, ຊຸມຊົນ ແລະ ຄົວເຮືອນພາຍໃນເຂດເທດສະບານ ແລະ ຊານເມືອງ.

**ມາດຕາ 19 ສິດ ແລະ ໜ້າທີ່ ຕຳຫຼວດສິ່ງແວດລ້ອມ ມີດັ່ງນີ້:**

1. ຕິດຕາມການຈັດຕັ້ງປະຕິບັດ ການຄຸ້ມຄອງສິ່ງເສດເຫຼືອທັງພາກລັດ, ເອກະຊົນ ແລະ ປະຊາຊົນ;

2. ໃຫ້ການຮ່ວມມືປະສານສົມທົບ ແລະ ເປັນເຈົ້າການໃນການລາດຕະເວນ,ການປັບໃໝ່ຜູ້ລະເມີດ;

3. ເປັນເຈົ້າການໃນການຮຽກເຊີນ ຕັກເຕືອນ ແລະ ປັບໃໝ່ຜູ້ລະເມີດຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 20 ສິດ ແລະ ໜ້າທີ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງມີດັ່ງນີ້:**

1. ຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງສິ່ງເສດເຫຼືອພາຍໃນເມືອງຂອງຕົນເອງຮັບປະກັນບໍ່ໃຫ້ຖິ້ມຊະຊາຍ ຕາມແຄມທາງ, ແຄມນ້ຳ ແລະ ສະຖານຕ່າງໆ;

2. ລາຍງານກ່ຽວກັບເງື່ອນໄຂຈຳເປັນດ້ານວິຊາການໃນການເກັບຮັກສາ ຫຼື ສະຖານທີ່ບຳບັດອື່ນໆ ໃຫ້ທາງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອພິຈາລະນາຄວາມຈຳເປັນຕ່າງໆ ໃນການກຳຈັດໃຫ້ຖືກຕ້ອງຕາມວິທີການ;

3. ໂຄສະນາ, ເຜີຍແຜ່, ສ້າງຈິດສຳນຶກໃຫ້ທົ່ວສັງຄົມພາຍໃນເມືອງຮັບຮູ້, ມີສ່ວນຮ່ວມ ແລະ ປະກອບສ່ວນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

4. ເກັບກຳແຫຼ່ງທີ່ເຮັດໃຫ້ເກີດສິ່ງເສດເຫຼືອ ແລະ ຫາວິທີການແກ້ໄຂ ໂດຍສົມທົບກັບອຳນາດການປົກຄອງເມືອງ, ກຸ່ມບ້ານ ພ້ອມທັງລາຍງານຂໍ້ມູນດັ່ງກ່າວໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຮັບຊາບເປັນແຕ່ລະໄລຍະ;

5. ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ບັນດາຫ້ອງການພາຍໃນເມືອງ, ກຸ່ມບ້ານ ແລະ ບ້ານ ພ້ອມທັງສ້າງຖານເກັບກຳຂໍ້ມູນເປັນຂອງເມືອງ;

6. ເປັນເຈົ້າການໃນການຮຽກເຊີນ ຕັກເຕືອນ ແລະ ປັບໃໝ່ຜູ້ລະເມີດ ຕາມຂໍ້ຕົກລົງສະບັບນີ້ໂດຍສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 21 ສິດ ແລະ ໜ້າທີ່ ອົງການປົກຄອງບ້ານ ມີດັ່ງນີ້:**

1. ຕິດຕາມກວດກາ ການຈັດຕັ້ງປະຕິບັດ ການຄຸ້ມຄອງສິ່ງເສດເຫຼືອ ພາຍໃນບ້ານຂອງຕົນເອງ ຮັບປະ ກັນບໍ່ໃຫ້ຖິ້ມຊະຊາຍ ຕາມແຄມທາງ, ແຄມນ້ຳ, ແຄມຫ້ວຍ ແລະ ສະຖານທີ່ຫ່ວງຫ້າມອື່ນໆ ພາຍໃນບ້ານ;

2. ລາຍງານ ຫຼື ສະເໜີ ກ່ຽວກັບເງື່ອນໄຂຈຳເປັນໃນດ້ານການເກັບຮັກສາ, ການຄຸ້ມຄອງສິ່ງເສດເຫຼືອ ຫຼື ສະຖານທີ່ບຳບັດອື່ນໆໃຫ້ທາງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງເພື່ອພິຈາລະນາຕາມຄວາມຈຳເປັນ ໃນການກຳຈັດສິ່ງເສດເຫຼືອໃຫ້ຖືກຕ້ອງຕາມວິທີການ;

3. ເປັນເຈົ້າການໃນການເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນດີ ພ້ອມທັງເປັນເຈົ້າການໃນການລາຍງານ, ການຕິດຕາມກວດກາການຈັດຕັ້ງປະຕິບັດ.

**ມາດຕາ 22 ອົງການກວດກາ**

**ອົງການກວດກາວຽກງານດັ່ງກ່າວ ປະກອບດ້ວຍ:**

1. ອົງການກວດກາພາຍໃນປະກອບດ້ວຍ: ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຕາມສິດ ແລະ ໜ້າທີ່ຂອງຕົນໃນມາດຕາທີ 16 ແລະ ມາດຕາ19 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກປະກອບດ້ວຍ: ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ-ເມືອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນແຂວງ-ເມືອງ, ປະຊາຊົນ, ສື່ມວນຊົນ ແລະ ເຈົ້າໜ້າທີ່ອື່ນໆ;

ອົງການກວດກາພາຍນອກມີສິດ ແລະ ໜ້າທີ່ໃນການຕິດຕາມກວດກາຕາມສິດ ແລະ ພາລະບົດບາດຂອງຕົນຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 23 ເນື້ອໃນການກວດກາ**

**ການກວດກາວຽກງານ ຄຸ້ມຄອງສິ່ງເສດເຫຼືອ ມີດັ່ງນີ້:**

1. ກວດກາການປະຕິບັດນະໂຍບາຍ , ລະບຽບການ ແລະ ກົດໝາຍ ທີ່ກ່ຽວຂ້ອງກັບວຽກງານກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ;

2. ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາອົງການໃນການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ;

3. ກວດກາ ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກ ຂອງຄະນະຮັບຜິດຊອບກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອເປັນແຕ່ລະໄລຍະ.

**ມາດຕາ 24 ຮູບການກວດກາ**

**ຮູບການກວດກາມີ 3 ຮູບການ ດັ່ງນີ້:**

1. ກວດກາຕາມປົກກະຕິ: ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

2. ກວດການອກແຜນການ: ເມື່ອເຫັນວ່າມີຄວາມຈຳເປັນ ຫຼື ໂດຍມີຂໍ້ມູນວ່າມີເຫດການທີ່ຜິດປົກກະຕິເກີດຂຶ້ນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ກວດກາແບບກະທັນຫັນ: ແມ່ນການກວດກາແບບຮີບດ່ວນໂດຍບໍ່ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ,ເຈົ້າໜ້າທີ່ກວດກາຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມລະບຽບແລະກົດໝາຍຢ່າງເຂັ້ມງວດ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນແມ່ນ: ການມີສ່ວນຮ່ວມໃນການປົກປັກຮັກສາສິ່ງແວດລ້ອມ, ການບໍລິຫານຈັດການສິ່ງເສດເຫຼືອ, ການຄັດແຍກຂີ້ເຫຍື້ອ ແລະ ບໍ່ຖິ້ມສິ່ງເສດເຫຼືອຊະຊາຍຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບກົດໝາຍ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງສິ່ງເສດເຫຼືອໃຫ້ມີປະສິດທິຜົນນັ້ນ ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ດ້ວຍຮູບການດັ່ງນີ້:

1. ຫ້າມຖິ້ມສິ່ງເສດເຫຼືອ ຫຼື ຂີ້ເຫຍື້ອ ຈາກຄົວເຮືອນ, ໂຮງຈັກ-ໂຮງງານ, ໂຮງໝໍ, ຫ້າງຮ້ານ, ສະຖານທີ່ບໍລິການອື່ນໆ.ຖິ້ມຊະຊາຍຕາມແຄມທາງ, ເຂດແຄມນ້ຳ, ແມ່ນ້ຳ ແລະ ເຂດທີ່ບໍ່ໄດ້ກຳນົດໄວ້ຢ່າງເດັດຂາດຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 500.000 ກີບ, ເຮັດບົດບັນທຶກໄວ້ພ້ອມທັງອະນາໄມຄືນ;
- **ຄັ້ງທີ2:**1.500.000 ກີບ, ເຮັດບົດບັນທຶກໄວ້ພ້ອມທັງອະນາໄມຄືນ, ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

2. ຫ້າມຈູດສິ່ງເສດເຫຼືອປະເພດຕ່າງໆ ເຊັ່ນ: ຖົງຢາງ, ກະຕຸກຢາງ, ກະປ໋ອງ, ຂວດແກ້ວ, ຢາງຕີນລົດ ແລະ ຂີ້ເຫຍື້ອ ອື່ນໆ ທີ່ມີຜົນກະທົບຕໍ່ເຮືອນໃກ້ຄຽງ ແລະ ສິ່ງແວດລ້ອມ-ສັງຄົມຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 500.000 ກີບ, ເຮັດບົດບັນທຶກໄວ້;
- **ຄັ້ງທີ2:** 1.000.000 ກີບ, ເຮັດບົດບັນທຶກ, ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

3. ຫ້າມຖອກ ແລະ ຖິ້ມເສດອາຫານ, ເສດນ້ຳມັນ, ສັດຕາຍ, ອາຈົມ ແລະ ວັດຖຸອັນຕະລາຍ ໃສ່ສະຖານທີ່ບໍ່ໄດ້ຮັບອະນຸຍາດເຊັ່ນ: ແຄມທາງ, ແຄມນ້ຳ, ແມ່ນ້ຳ, ນ້ຳຫ້ວຍ, ໜອງ, ຮ່ອງລະບາຍນ້ຳ ແລະ ດິນນາ ຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 1.000.000 ກີບ ແລະ ເຮັດບົດບັນທຶກໄວ້ພ້ອມທັງອະນາໄມຄືນ;
- **ຄັ້ງທີ2:** 2.000.000 ກີບ ແລະ ເຮັດບົດບັນທຶກໄວ້ພ້ອມທັງອະນາໄມຄືນ, ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

4. ຫ້າມນຳໃຊ້ຢາຂ້າຫຍ້າ, ຢາປາບສັດຕູພືດ, ສານເຄມີຢູ່ແຄມແມ່ນ້ຳ, ຫ້ວຍນ້ຳ, ໜອງ, ຮ່ອງລະບາຍນ້ຳ, ເຂດຜະລິດການກະສິກຳ ແລະ ສະຖານທີ່ຕ້ອງຫ້າມຕ່າງໆຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 1.000.000 ກີບ ແລະ ເຮັດບົດບັນທຶກໄວ້;

- **ຄັ້ງທີ2:**3.000.000 ກີບ ແລະ ເຮັດບົດບັນທຶກໄວ້ພ້ອມຍຶດອຸປະກອນ ແລະ ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດສັງກັດຢູ່ ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

**5.** ຫ້າມສ້າງສິ່ງລົບກວນຕ່າງໆເຊັ່ນ: ແສງ, ສຽງ, ສີ, ກິ່ນ, ການສັ່ນສະເທືອນ ແລະ ຝຸ່ນລະອອງ ເກີນຄ່າມາດຕະຖານ ສິ່ງແວດລ້ອມແຫ່ງຊາດອະນຸຍາດໃຫ້ເຊັ່ນ: ສຽງເກີນ 70 ດີຊີເບວ, ສີເກີນ 15 ສີ, ຝຸ່ນລະອອງ ເກີນ 0,39 ມິນລີກຼາມຕໍ່ແມັດກ້ອນ, ແສງເກີນຄ່າມາດຕະຖານ ແລະ ກິ່ນຕ້ອງຢູ່ຫ່າງຈາກທີ່ຢູ່ອາໄສ 20ແມັດ ຖ້າຍັງມີກິ່ນເໝັນຖືວ່າລົບກວນຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 500.000 ກີບ ແລະ ເຮັດບົດບັນທຶກໄວ້ ແລະ ເສຍຄ່າສິ້ນເປືອງຕ່າງໆ ຕາມລະບຽບການ;
- **ຄັ້ງທີ່2:**1.000.000ກີບ ແລະ ປັບປຸງຄືນ ພ້ອມທັງເຮັດບົດບັນທຶກ, ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

**6.** ຫ້າມຂົນສິ່ງຢາງພາລາກ້ອນເໝັນ (ຢາງດິບກ້ອນເໝັນ) ແລະ ສິ່ງທີ່ມີກິ່ນເໝັນມາຈອດໄວ້ຢູ່ເຂດຊຸມຊົນເທດສະບານແຂວງ, ເທດສະບານເມືອງໃນເວລາເກີນ 3 ຊົ່ວໂມງ ຫຼື ຫຼາຍອັນຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 1.000.000 ກີບ ເຮັດບົດບັນທຶກໄວ້, ໃຫ້ຍ້າຍລົດອອກ ແລະ ລ້າງພ້ອມ;
- **ຄັ້ງທີ2:** 2.000.000 ກີບ, ເຮັດບົດບັນທຶກ ພ້ອມທັງໃຫ້ຍ້າຍລົດອອກ , ລ້າງພ້ອມ ແລະ ແຈ້ງໃຫ້ອົງການຈັດຕັ້ງ ທີ່ຜູ້ກະທຳຜິດ ສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

**7.** ຫ້າມເກັບມ້ຽນ ແລະ ເກັບຊື້ (ສິ່ງທີ່ມີກິ່ນເໝັນ)ຕາມສະຖານທີ່ຕ່າງໆ ໃນເຂດຊຸມຊົນ ແລະ ໃກ້ເຂດຊຸມຊົນ ເປັນຕົ້ນແມ່ນ: ເກັບຊື້ຢາງພາລາ, ການເກັບມ້ຽນຢາງພາລາ, ການຜະລິດໜັງຍຳ ແລະ ປະເພດອື່ນໆທີ່ມີກິ່ນເໝັນ ຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 500.000 ກີບ ແລະ ເຮັດບົດບັນທຶກໄວ້ ຍົກຍ້າຍອອກຈາກເຂດດັ່ງກ່າວ;
- **ຄັ້ງທີ2:**1.000.000ກີບ ແລະ ເຮັດບົດບັນທຶກໄວ້ ຍົກຍ້າຍອອກຈາກເຂດດັ່ງກ່າວ, ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດ ສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

**8.** ການລ້ຽງສັດຂອງຄົວເຮືອນ ຫ້າມສິ່ງຜົນກະທົບ ດ້ານກິ່ນເໝັນ, ສຽງ ແລະ ການລົບກວນ (ແມງວັນ..) ຕໍ່ໃກ້ຄຽງເປັນຕົ້ນແມ່ນ: ໃນຄົວເຮືອນພາຍໃນບ້ານ, ເຂດເທດສະບານແຂວງ, ເຂດເທດສະບານເມືອງ ຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 500.000ກີບ ແລະ ເຮັດບົດບັນທຶກໄວ້ປັບປຸງໃຫ້ດີຂຶ້ນ ຫຼື ຍົກຍ້າຍອອກຈາກເຂດດັ່ງກ່າວ;
- **ຄັ້ງທີ2:**1.000.000ກີບ, ເຮັດບົດບັນທຶກພ້ອມທັງ ໃຫ້ຍົກຍ້າຍອອກເຂດດັ່ງກ່າວ ແລະ ແຈ້ງໃຫ້ອົງການຈັດຕັ້ງ ທີ່ຜູ້ກະທຳຜິດ ສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

9. ຫ້າມເຮັດໃຫ້ເສດດິນ, ຫີນ,ແຮ່-ຊາຍ ແລະ ສິ່ງເສດເຫຼືອ (ຂີ້ເຫຍື້ອ)ຕົກເຮ່ຍຕາມເສັ້ນທາງ ແລະ ສະຖານທີ່ເກືອດຫ້າມຖ້າລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ:

- **ຄັ້ງທີ1:** 500.000 ກີບ ແລະ ເຮັດບົດບັນທຶກໄວ້ພ້ອມທັງອະນາໄມຄືນ;
- **ຄັ້ງທີ2:**1.000.000 ກີບ, ເຮັດບົດບັນທຶກໄວ້ ພ້ອມທັງອະນາໄມຄືນ, ແຈ້ງໃຫ້ອົງການຈັດຕັ້ງທີ່ຜູ້ກະທຳຜິດສັງກັດຢູ່ຮັບຊາບ;
- **ຄັ້ງທີ3:** ສະເໜີພາກສ່ວນທີ່ກ່ຽວຂ້ອງດຳເນີນຕາມກົດໝາຍ.

❖ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ພົບເຫັນຜູ້ລະເມີດຕາມ 09 ຂໍ້ຂ້າງເທິງນັ້ນຈະໄດ້ຮັບການຊົມເຊີຍດັ່ງນີ້:

| | |
|---|---|
| - ຜູ້ລາຍງານ | 30% ຂອງມູນຄ່າທີ່ຖືກປັບໃໝ; |
| - ຜູ້ຈັດຕັ້ງປະຕິບັດ | 25% ຂອງມູນຄ່າທີ່ຖືກປັບໃໝ; |
| - ມອບເຂົ້າງົບປະມານຂອງລັດ | 25% ຂອງມູນຄ່າທີ່ຖືກປັບໃໝ; |
| - ກອງທຶນການຄຸ້ມຄອງສິ່ງເສດເຫຼືອ | 20% ຂອງມູນຄ່າທີ່ຖືກປັບໃໝ. |

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງສົມທົບ ກັບບັນດາອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ດຳເນີນການໂຄສະນາເຜີຍແຜ່ໃຫ້ທົ່ວສັງຄົມໄດ້ຮັບຊາບ ແລະ ຜັນຂະຫຍາຍໃຫ້ແກ່ຫ້ອງການຊັບພະຍາກອນທຳຊາດ ແລະ ສິ່ງແວດລ້ອມ ບັນດາເມືອງໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບຂະແໜງການ , ອົງການປົກຄອງເມືອງ ແລະ ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງທົ່ວເຖິງ;

2. ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ-ເມືອງ, ການຈັດຕັ້ງທຸກຂັ້ນ ຕະຫຼອດຮອດພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ, ຜູ້ປະກອບການລົງທຶນ ແລະ ກິດຈະການພັດທະນາອື່ນໆໃນທົ່ວແຂວງຫຼວງນໍ້າທາ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງຫຼວງນໍ້າທາ**

**ຄຳໄຫຼ ສີປະເສີດ**